# ໜັງສືໂກໂລດ

ໃຈຄວາມສຳຄັນ: ເຖິງທີ່ສຳເຣັດໄດ້ດ້ວຍອົງພຣະຄຣິດ ຫລືໜັງສືທີ່ວ່າດ້ວຍເຣື່ອງພຣະຄຣິດ

ຈຳນວນບົດ: ໔ ບົດ

## ວ່າດ້ວຍເວລາທີ່ຂຽນແລະຜູ້ຮັບໜັງສືນີ້

ທ່ານໂປໂລໄດ້ຂຽນໜັງສືນີ້ເມື່ອຄາວຢູ່ຄຸກທີ່ກຸງໂຣມ(໔:໓–໑໘) ເມື່ອປີ ຄ.ສ. ໖໒ ແລ້ວຝາກມາຍັງຄຣິສຕະຈັກທີ່ເມືອງໂກໂລດ (໑:໒) ຄຣິສຕະຈັກໃນເມືອງນີ້ບໍ່ແມ່ນທ່ານໂປໂລເປັນຜູ້ຈັດຕັ້ງຂຶ້ນແຕ່ເພິ່ນໄດ້ບອກໃນໜັງສືນີ້ວ່າ ທ່ານເອປາພາດເປັນຜູ້ສອນແລະຈັດຕັ້ງຂຶ້ນ (໑:໗, ໔:໑໒)

ພວກເຮົາຍັງຈຳໄດ້ວ່າ ພາຍໃນສອງປີທີ່ທ່ານໂປໂລຢູ່ໃນເມືອງເອເຟດນັ້ນ ບັນດາຊົນຊາດໃນເຂດອາເຊັຍກໍໄດ້ຍິນຂ່າວປະເສີດນຳເພິ່ນ ແລ້ວທ່ານເອປາພາດໄດ້ເຊື່ອແລະເປັນພະຍານຝ່າຍພຣະເຢຊູ.

ພວກຄຣິສຕຽນໃນເມືອງນີ້ ໄດ້ປະພຶດຢ່າງດີແລະເປັນຄົນສັດຊື່ໃນພຣະອົງເຈົ້າເຢຊູ ພ້ອມທັງເປັນຜູ້ມີແບບຢ່າງອັນດີງາມ(໑:໓ - ໖;໒:໔)

## ວ່າດ້ວຍຄວາມມຸ່ງໝາຍ:

ໃນຂະນະທີ່ທ່ານເອປາພາດມາຢ້ຽມຢາມທ່ານໂປໂລທີ່ກຸງໂຣມ ເພິ່ນໄດ້ບອກຂ່າວກ່ຽວກັບພວກພີ່ນ້ອງໃຫ້ທ່ານໂປໂລຊາບ (໑:໘) ເຖິງວ່າພວກພີ່ນ້ອງຈະມີຄວາມຈະເຣີນຂຶ້ນ ກໍມີຄວາມກັນດານຫລາຍ ທັງນີ້

ເພາະມີຄູສອນປອມໄດ້ມາສັ່ງສອນ (ບົດ ໒) ຄືພວກເຂົາໄດ້ສັ່ງສອນດັ່ງນີ້:

- ໃຫ້ຖືຮີດຄອງຂອງພວກຢູເດ ໒:໑໖–໒໐
- ສອນໃຫ້ລຸ່ມຫລົງດ້ວຍຫລັກປະຣັຊຍາ (ປັນຍາຂອງໂລກ) ໒:໑໘
- ສອນໃຫ້ຂາບໄຫວ້ເທວະດາ ໒:໑໘
- ສອນໃຫ້ທໍຣະມານຮ່າງກາຍ ໒:໒໓

ສະນັ້ນທ່ານໂປໂລຈຶ່ງໄດ້ຂຽນໜັງສືນີ້ ສົ່ງໄປແກ້ຄຳສອນປອມ ເພື່ອຕັກເຕືອນພວກພີ່ນ້ອງໃຫ້ຣະມັດຣະວັງຕົວ.

## ວ່າດ້ວຍເນື້ອຄວາມ:

ໃນໜັງສືໂກໂລດນີ້ ທ່ານໂປໂລໄດ້ເປີດເຜີຍຄວາມຍິ່ງໃຫຍ່ຂອງພຣະເຢຊູຄຣິດ ທ່ານໂປໂລໄດ້ເລົ່າເຣື່ອງຄຣິສຕະຈັກໃນໜັງສືເອເຟດຫລາຍປານໃດ ໃນໜັງສືໂກໂລດກໍໄດ້ເລົ່າເຣື່ອງພຣະເຢຊູຄຣິດຫລາຍປານນັ້ນ ຄືໄດ້ຂຽນພຣະນາມພຣະເຢຊູຄຣິດໄວ້ເຖິງ ໔໖ ເທື່ອ ແລະໄດ້ຂຽນສພາບຂອງພຣະເຢຊູຄຣິດເພື່ອ ກ່າວແກ້ຂໍ້ຄວາມຂອງພວກຄູສອນປອມນັ້ນ ຈົນຂ່າວປະເສີດຂອງພຣະເຢຊູຄຣິດມີອຳນາດແຜ່ໄປທົ່ວໂລກ ແລະໄດ້ເກີດໝາຍຜົນຢ່າງມະຫາສານ (໑:໑–໑໑) ຂ່າວປະເສີດນີ້ແຫລະຄືພຣະປັນຍາອັນແທ້ຈິງ ບົດ ໒:໒–໔

## ພຣະຄຣິດຊົງຢູ່ຣະຫວ່າງພຣະເຈົ້າກັບມະນຸດ:

໑. ເພາະພຣະຄຣິດຊົງເປັນພຣະເຈົ້າ ບົດ ໑:໑໔,໑໙; ໒:໙

໒. ພຣະຄຣິດຈຶ່ງ ເປັນ ເອກ ໃນ ສັບພະສິ່ງ ທັງປວງແລະ ຈຶ່ງມິຣະນິດ ສ້າງ ທຸກ ໆ ສິ່ງ  ບົດ ໑:໑໕–໑໗

໓. ພຣະຄຣິດຈຶ່ງເປັນຫົວຂອງຄຣິສຕະຈັກ  ແລະຈຶ່ງໃຫ້ມະນຸດເປັນໄມຕຣີກັນກັບພຣະເຈົ້າດ້ວຍພຣະໂລຫິດຂອງພຣະອົງ

ບົດ ໑:໑໘–໒໒

## ວ່າດ້ວຍຄວາມລອດພົ້ນ ດ້ວຍກິຈການ ຂອງພຣະເຢຊູຄຣິດ

ບົດ ໑:໑໒–໒໓

໑. ລອດພົ້ນຈາກອຳນາດມືດ  ບົດ ໑:໑໓

໒. ຖືກຕັ້ງໄວ້ໃນແຜ່ນດິນຂອງພຣະບຸດ  ບົດ ໑:໑໓

໓. ໄດ້ຮັບການໄຖ່ໂທດ  ບົດ ໑:໑໔

໔. ໄດ້ເປັນໄມຕຣີກັນກັບພຣະເຈົ້າ ໄດ້ຄືນດີນຳ ພຣະເຈົ້າ  ບົດ ໑:໒໐

໕. ໄດ້ຢູ່ໃນຄວາມສຸກສຳຣານດ້ວຍກັນກັບພຣະເຈົ້າ  ບົດ ໑:໒໐

໖. ໄດ້ຮັບມໍຣະດົກເປັນສ່ວນຂອງພວກບໍຣິສຸດ  ບົດ ໑:໑໒

## ການເຂົ້າສ່ວນກັນກັບພຣະເຢຊູຄຣິດ:

໑. ໃນຄວາມຕາຍແລະການຄືນມາຈາກຕາຍ  ບົດ ໒:໒໐

໒. ການດຳເນີນໄປດ້ວຍກັນກັບພຣະຄຣິດ  ບົດ ໓

ການແບ່ງເປັນພາກ:

ພາກທີ ໑ ວ່າດ້ວຍຄຳນຳ ບົດ ໑:໑–໑໔

໑. ຄວາມຄຳນັບ ບົດ ໑:໑–໒

໒. ຄຳສັນລະເສີນ ບົດ ໑:໓–໘

໓. ຄຳອ້ອນວອນທູນຂໍເພື່ອພວກພີ່ນ້ອງ ບົດ ໑:໙–໑໔

ພາກທີ ໒ ວ່າດ້ວຍພຣະໂອວາດຂອງອົງພຣະຄຣິດ ບົດ ໑:໑໕–໒:໓

໑. ຄວາມຍິ່ງໃຫຍ່ແຫ່ງສະພາບຂອງພຣະຄຣິດ ບົດ ໑:໑໕–໑໙

໒. ຄວາມຍິ່ງໃຫຍ່ແຫ່ງກິຈການຂອງ ພຣະຄຣິດ ບົດ ໑:໒໐–໒໓

໓. ຄວາມຍິ່ງໃຫຍ່ໃນການບໍຣະບັດຂອງ ພຣະຄຣິດ ບົດ ໑:໒໔–໒:໓

ພາກທີ ໓ ວ່າດ້ວຍຊີວິດຂອງເຮົາໃນພຣະເຢຊູ ບົດ ໒:໔–໒໓

໑. ຄຣິສຕະຈັກຕ້ອງຣະວັງການຫລອກລວງ ບົດ ໒:໔–໗

໒. ຄຣິສຕະຈັກມີສະພາບແລະຄຸນສົມບັດ ຢ່າງໃດ ບົດ ໒:໘–໑໕

໓. ຄຣິສຕະຈັກຕ້ອງຣະວັງຄຣູສອນປອມ ບົດ ໒:໑໖–໒໓

ພາກທີ ໔ ວ່າດ້ວຍຄວາມປະພຶດຂອງຄົນຄຣິສຕຽນ
ບົດ ໓:໑–໔:໖

໑. ຄວາມປະພຶດໃນຊີວິດໃໝ່ ບົດ ໓:໑–໑໗

໒. ໜ້າທີ່ໝາຍໃນຄອບຄົວຂອງຄົນ
ຄຣິສຕຽນ ບົດ ໓:໑໘–໔:໖

ເຣື່ອງສຸດທ້າຍ ການສະແດງຄວາມຄຳນັບ ບົດ ໔:໗–໑໘